# ສະຫລອງໄຊຊະນະ (ພາກ ໔)

ອີກເທື່ອນຶ່ງຜູ້ຂຽນມີໂອກາດໄປຮ່ວມງານຣາຕຣີສະໂມສອນຊຶ່ງຈັດຂຶ້ນ ໂດຍສະມາ ຄົມກິລາ ລາວາລ ໂດຍມີນັກກິລາແລະຜູ້ສະນັບສະນູນນັກກິລາ ເຂົ້າຮ່ວມຢ່າງມາກໜ້າ ຫລາຍຕາ ຈຸດປະສົງຂອງການຈັດງານຄັ້ງນີ້ກໍເພື່ອໃຫ້ມີການມອບຂັນໃຫ້ແກ່ຜູ້ຊະນະທີ່ 1 ທີ່ 2 ແລະ ທີ່ 3 ດັ່ງທີ່ໄດ້ຂຽນໄປແລ້ວໃນສະບັບກ່ອນ ທີມທີ່ໄດ້ທີ່ 3 ຄືທີມ ບົວບລຽງ ທີ່ມທີ່ໄດ້ທີ່ 2 ແມ່ນທີມ ອາລຟາ ແລະທີມທີ່ໄດ້ທີ່ 1 ແມ່ນທີມ ຫາດຊາຍຟອງ ຫລັງຈາກ ການມອບຂັນຊະນະເລີດ ແລະ ຊະນະລອງຕາມລຳດັບແລ້ວ ກໍ່ແມ່ນເປັນການມ່ວນຊື່ນແບບລາວໆ ທີ່ມີທັງລຳວົງຈັງຫວະຕ່າງໆ ແລະ ຈັງຫວະສາກົລສັບປ່ຽນກັນໄປແບບມ່ວນຊື່ນແລະສ້າງສັນຄວາມຮັກແພງ ຊຶ່ງແຕກຕ່າງຈາກການເຕະບານທີ່ທີມໃດກໍ່ຫວັງໄຊຊະນະບໍ່ເຂົ້າໃຜອອກໃຜ ແຕ່ຄ່ຳຄືນນີ້ປາກົດວ່າທຸກຄົນມ່ວນຊື່ນແບບຮັກແບບແພງກັນ ບ່າຊົມເຊີຍ ສົມເປັນນັກກິລາແທ້ໆ















